ການຂົ່ມເຫັງທາງເພດ ໃນທີ່ພັກອາໄສ

ມັນເປັນການລະເມີດກົດໝາຍສຳລັບຜູ້ໃຫ້ບໍລິການທີ່ພັກອາໄສ ຫຼື ພະນັກງານຂອງເຂົາເຈົ້າທີ່ຈະ:

- ຂໍຮ້ອງໃຫ້ທ່ານມີເພດສຳພັນດ້ວຍເພື່ອແລກປ່ຽນກັບການເຊົ່າເຮືອນ;
- ຂົ່ມຂູ່ທີ່ຈະໄລ່ທ່ານອອກເນື່ອງຈາກທ່ານປະຕິເສດທີ່ຈະມີເພດສຳພັນດ້ວຍ ຫຼືເນື່ອງຈາກທ່ານລາຍງານເຖິງການຂົ່ມເຫັງ;
- ປະຕິເສດທີ່ຈະໃຫ້ທ່ານເຊົ່າອາພາດເມັນທ໌ ຫຼື ຍອມຮັບທ່ານເຂົ້າໃນທີ່ພັກອາໄສຊົ່ວຄາວ ເວັ້ນແຕ່ວ່າທ່ານຈະມີເພດສຳພັນກັບເຂົາ/ລາວກ່ອນ;
- ບໍ່ສ້ອມແປງໃຫ້ເນື່ອງຈາກທ່ານຈະບໍ່ມີເພດສຳພັນດ້ວຍ ຫຼື ເນື່ອງຈາກທ່ານບອກເຂົາ/ລາວໃຫ້ຢຸດ;
- ສະແດງຄວາມຄິດເຫັນໃນທາງເພດຕໍ່ທ່ານຊຶ່ງເຮັດໃຫ້ທ່ານຮູ້ສຶກວ່າຖືກຂົ່ມຂູ່ ຫຼື ບໍ່ສະບາຍໃຈ;
- ແຕະຕ້ອງຕົວທ່ານໃນຮູບແບບທາງເພດທີ່ບໍ່ເປັນທີ່ຕ້ອງການ;
- ຂົ່ມຂືນ ຫຼື ຂົ່ມເຫັງທາງເພດຕໍ່ທ່ານ;

ເຖິງແມ່ນວ່າ ທ່ານເຄີຍໄດ້ເຮັດຕາມຄຳຮຽກຮ້ອງທາງເພດໃນອະດີດ, **ທ່ານກໍມີສິດທີ່ຈະຍຸດຕິດຽວນີ້. ການກະທຳທັງໝົດເຫຼົ່ານີ້ແມ່ນຜິດຕໍ່ກົດໝາຍ.**

ທ່ານມີສິດທີ່ຈະເປັນອິດສະຫຼະຈາກການຖືກຂົ່ມເຫັງທາງເພດ!



ການຂົ່ມເຫັງທາງເພດໃນທີ່ພັກອາໄສແມ່ນຫຍັງ?

ການຂົ່ມເຫັງທາງເພດໃນທີ່ພັກອາໄສແມ່ນເມື່ອຜູ້ໃຫ້ບໍລິການທີ່ພັກອາໄສ ຫຼື ພະນັກງານຂອງເຂົາເຈົ້າເອົາປຽບທາງເພດຊຶ່ງບໍ່ເປັນທີ່ຕ້ອງການ, ຮຽກຮ້ອງທາງເພດ, ໃຊ້ຄຳເວົ້າ ຫຼື ການກະທຳທີ່ອອກໄປທາງເພດ, ຂົ່ມຂືນ ຫຼື ຂົ່ມເຫັງທາງເພດຕໍ່ທ່ານ.

ເຈົ້າຂອງເຮືອນເຊົ່າຂອງທ່ານຍັງຕ້ອງແກ້ໄຂບັນຫາຕໍ່ຜູ້ຢູ່ອາໄສໃນເລື່ອງການຂົ່ມເຫັງຜູ້ຢູ່ອາໄສດ້ວຍ!

ມີຫຍັງແດ່ທີ່ທ່ານສາມາດເຮັດໄດ້?

- ເກັບຮັກສາເອກະສານທັງໝົດ - ບັນທຶກ, ແຈ້ງການ, ໃບຮັບ, ຂໍ້ຄວາມໃນໂທຣະສັບ, ຂໍ້ມູນຕິດຕໍ່, ຈົດໝາຍ, ອື່ນໆ.
- ຖ່າຍຮູບບັນຫາ ຖ້າວ່າທ່ານເຮັດໄດ້.
- ເອົາຊື່ ແລະຈຳນວນຄົນທີ່ກ່ຽວຂ້ອງ.
- ເອົາຕົວເລກ - ວັນທີເກີດເຫດການ, ທີ່ຢູ່ບ່ອນທີ່ເກີດເຫດການ, ຄ່າໃຊ້ຈ່າຍຕ່າງໆ.
- ລົມກັບເພື່ອນບ້ານ – ມີໃຜອີກແດ່ທີ່ກຳລັງປະສົບກັບບັນຫານີ້? ໃຜເຫັນເຫດການແດ່?

ທ່ານມີສິດທີ່ຈະຍື່ນເລື້ອງຮ້ອງທຸກຕ້ານຕໍ່ບຸກຄົນທີ່ຂົ່ມເຫັງທາງເພດຕໍ່ທ່ານ. ທ່ານມີເວລາ 1 ປີເພື່ອຍື່ນຄຳຮ້ອງທຸກຫຼັງຈາກມີການຈຳແນກເກີດຂຶ້ນ ແລະ 2 ປີເພື່ອຍື່ນເລື້ອງຟ້ອງຮ້ອງຄະດີ. ຖ້າວ່າ ທ່ານຕ້ອງການຂໍ້ມູນຕື່ມກ່ຽວກັບສິດທິຂອງທ່ານ, ທ່ານອາດໂທຣຫາ **ສະພາດູແລ ທີ່ພັກອາໄສທີ່ເປັນທັມຂອງຣັຖອໍຣິກອນ** ທີ່ເລກໂທຣ **1-800-424-3247**, ຕໍ່ 2, ຫຼືຢ້ຽມຊົມເວັບໄຊຂອງພວກເຮົາທີ່ **www.fhco.org**. ບໍລິການຂອງພວກເຮົາແມ່ນບໍ່ເສັງຄ່າໃຊ້ຈ່າຍ ແລະເປັນຄວາມລັບ.

EQUAL HOUSING OPPORTUNITY

ວຽກທີ່ເປັນພື້ນຖານສຳລັບການຕີພິມນີ້ແມ່ນໄດ້ຮັບການສະໜັບສະໜູນຈາກກອງທຶນພາຍໃຕ້ທຶນຊ່ວຍເຫຼືອຂອງກະຊວງດູແລທີ່ພັກອາໄສແລະການພັດທະນາເມືອງຂອງສະຫະຣັຖອາເມຣິກາ. ເນື້ອໃນແລະວຽກນີ້ ແມ່ນອຸທິດໃຫ້ແກ່ສາທາລະນະ. ຜູ້ແຕ່ງແລະຜູ້ພິມຮັບຜິດຊອບແຕ່ພຽງ ຜູ້ດຽວຕໍ່ຄວາມຖືກຕ້ອງຂອງຂໍ້ຄວາມແລະການຕີຄວາມທີ່ບັນຈຸຢູ່ໃນ ສິ່ງຕີພິມນີ້. ການຕີຄວາມດັ່ງກ່າວບໍ່ຈຳເປັນຕ້ອງສະທ້ອນເຖິງຄວາມຄິດເຫັນ

ມີຂໍ້ມູນການບໍລິການສະໜອງໃຫ້ໃນຮູບແບບອື່ນ ແລະມີບໍລິການແປພາສາ.